

# ກອງປະຊຸມໃຫຍ່ ຜູ້ແທນສະມາຊິກພັກ ຄັ້ງທີ III




ກອງປະຊຸມໃຫຍ່ຜູ້ແທນສະມາຊິກພັກ ຄັ້ງທີ III ຂອງອົງຄະນະພັກ ກະຊວງເຕັກໂນໂລຊີ ແລະ ການສື່ສານ ໄດ້ດຳເນີນຢ່າງເປັນທາງການ ທີ່ນະຄອນຫຼວງວຽງຈັນ ໃນລະຫວ່າງວັນທີ 26-27 ສິງຫາ 2025 ພາຍໃຕ້ຄຳຂວັນ: **"ຍົກສູງບົດບາດການນຳພາ ຜັນຂະຫຍາຍການນຳໃຊ້ເຕັກໂນໂລຊີດີຈິຕອນ ກາຍເປັນກຳລັງຂັບເຄື່ອນທີ່ແຂງແຮງ ຕໍ່ການພັດທະນາປະເທດຊາດ ຫັນເປັນ ລັດຖະບານດີຈິຕອນ, ເສດຖະກິດດີຈິຕອນ ແລະ ສັງຄົມດີຈິຕອນ ໃຫ້ມີຄວາມເຂັ້ມແຂງ ໜັກແໜ້ນ ແລະ ຍືນຍົງ".** ກອງປະຊຸມໃຫຍ່ຄັ້ງນີ້ ມີຜູ້ແທນສົມບູນເຂົ້າຮ່ວມທັງໝົດຈຳນວນ 220 ສະຫາຍ, ຍິງ 71 ສະຫາຍ ເຊິ່ງເປັນຕົວແທນໃຫ້ແກ່ສະມາຊິກພັກທົ່ວອົງຄະນະພັກ ກະຊວງເຕັກໂນໂລຊີ ແລະ ການສື່ສານ ທັງໝົດ 799 ສະຫາຍ, ຍິງ 309 ສະຫາຍ, ໃນ 35 ໜ່ວຍພັກ ອ້ອມຂ້າງອົງຄະນະພັກກະຊວງ, ພ້ອມທັງມີແຂກຖືກເຊີນເຂົ້າຮ່ວມ 20 ສະຫາຍ. ບັນດາຜູ້ແທນເຂົ້າຮ່ວມກອງປະຊຸມໃຫຍ່ ໄດ້ຍົກສູງຄວາມຮັບຜິດຊອບ, ສຸມສະຕິປັນຍາຂອງຕົນ ຄົ້ນຄວ້າ ປະກອບຄຳຄິດຄຳເຫັນ ຕໍ່ເນື້ອໃນບົດລາຍງານ ຢ່າງກົງໄປ ກົງມາ ດ້ວຍບັນຍາກາດທີ່ຟົດຟື້ນ ແລະ ມີຜົນສຳເລັດຕາມຈຸດປະ ສົງທີ່ວາງໄວ້.

**ກອງປະຊຸມໃຫຍ່ຄັ້ງນີ້ ຜູ້ແທນກອງປະຊຸມໄດ້ລົງປະຊາມະຕິຢ່າງເປັນເອກະສັນ ຮັບຮອງເອົາບັນດາເນື້ອໃນສຳຄັນດັ່ງນີ້:**

ຜູ້ແທນກອງປະຊຸມໄດ້ພ້ອມກັນຄົ້ນຄວ້າ, ປະກອບຄຳຄິດ ຄຳເຫັນ ແລະ ເຫັນດີ ເປັນເອກະພາບຢ່າງສົມບູນ ຕໍ່ບົດລາຍງານການເມືອງ, ແຜນພັດທະນາເຕັກໂນໂລຊີ ແລະ ການສື່ສານ 5 ປີ ຄັ້ງທີ IV (2026-2030) ແລະ ບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານພັກ ກະຊວງເຕັກໂນໂລຊີ ແລະ ການສື່ສານ ສະໄໝທີ II, ພ້ອມນີ້ກໍ່ໄດ້ກຳນົດທິດທາງໜ້າທີ່ວຽກງານ 5ປີ ໃນຕໍ່ໜ້າ ພາຍໃຕ້ຄຳ **"ຍົກສູງບົດບາດການນຳພາ ຜັນຂະຫຍາຍການນຳໃຊ້ເຕັກໂນໂລຊີດີຈິຕອນ ກາຍເປັນກຳລັງຂັບເຄື່ອນທີ່ແຂງແຮງ ຕໍ່ການພັດທະນາປະເທດຊາດ ຫັນເປັນ ລັດຖະບານດີຈິຕອນ, ເສດຖະກິດດີຈິຕອນ ແລະ ສັງຄົມດີຈິຕອນ ໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ ແລະ ຍືນຍົງ"** ໂດຍເພີ່ມທະວີການນຳພາ ຂອງພັກ, ສ້າງພັກໃຫ້ປອດໃສ ເຂັ້ມແຂງ ໜັກແໜ້ນ; ບຳລຸງສ້າງຖັນແຖວພະນັກງານໃຫ້ ຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ; ສືບຕໍ່ພາລະກິດປ່ຽນແປງໃໝ່ ໂດຍຖືເອົາເສດຖະກິດເປັນໃຈກາງ ດ້ວຍການຕັ້ງໜ້າຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ເຂົ້າໃນຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ຢ່າງມີປະສິດທິຜົນສູງ, ສ້າງບາດກ້າວບຸກທະລຸຢ່າງແຂງແຮງໃນການພັດທະນາ ໂຄງລ່າງພື້ນຖານ, ການຄຸ້ມຄອງ ແລະ ການບໍລິການ ດ້ານເຕັກໂນໂລຊີ ແລະ ການສື່ສານ ຢ່າງເປັນລະບົບ ແລະ ມີປະສິດທິຜົນສູງ ກາຍເປັນກຳລັງແຮງທີ່ສຳຄັນ ແລະ ພື້ນຖານໃນການຂັບເຄື່ອນການພັດທະນາປະເທດຊາດກ້າວສູ່ອຸດສາຫະກຳ 4.0 ປະກອບສ່ວນໃນການພັດທະນາເສດຖະກິດ-ສັງຄົມ ຢ່າງແຂງແຮງ ແລະ ໄດ້ລົງມະຕິຮັບຮອງເອົາຢ່າງເປັນເອກະສັນ ຕໍ່ກັບບັນດາ ເນື້ອໃນເອກະສານດັ່ງກ່າວ ແລະ ໄດ້ວາງຄາດໝາຍສູ້ຊົນບັນດາໜ້າວຽກຕົ້ນຕໍດັ່ງນີ້:

**ໜຶ່ງ** ໂຄສະນາເຜີຍແຜ່ ແລະ ເຊື່ອມຊຶມແນວທາງນະໂຍບາຍຂອງພັກ ໃຫ້ແກ່ພະນັກງານການນຳຫຼັກແຫຼ່ງ, ສະມາຊິກພັກ, ພະນັກງານ-ລັດຖະກອນທຸກສະຫາຍໃນກະຊວງເຕັກໂນໂລຊີ ແລະ ການສື່ສານ ດ້ວຍຫຼາຍຮູບແບບ, ຫຼາຍວິທີການ ໃຫ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ສາມາດຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ.

**ສອງ** ຄົ້ນຄວ້າຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XII ຂອງພັກ, ບັນດາມະຕິຄຳສັ່ງ ແລະ ທິດນຳຂອງກົມການເມືອງສູນກາງພັກ ແລະ ມະຕິກອງປະຊຸມໃຫຍ່ ຄັ້ງທີ III ຂອງອົງຄະນະພັກກະຊວງ ໃຫ້ເປັນແຜນວຽກລະອຽດ ປະຈຳເດືອນ, ປະຈຳໄຕມາດ, ປະຈຳ 6 ເດືອນ ແລະ ປະຈຳປີ, ເພື່ອເປັນທິດທາງການເຄື່ອນໄຫວຈັດຕັ້ງປະຕິບັດໜ້າທີ່ການ ເມືອງຂອງຕົນ.

**ສາມ** ສືບຕໍ່ກໍ່ສ້າງບັນດາໜ່ວຍພັກ, ຄະນະພັກຮາກຖານ ແລະ ສະມາຊິກພັກ ໃຫ້ປອດໃສ ເຂັ້ມແຂງ ໜັກ ແໜ້ນ ໃຫ້ໄດ້ຫຼາຍກວ່າ 80%.

ສີ່ ສ້າງພະນັກງານນຳພາຄຸ້ມຄອງໃຫ້ມີທັດສະນະການເມືອງໜັກແໜ້ນ ໂດຍສະເພາະພະນັກງານຂັ້ນກົມ/ທຽບເທົ່າໃຫ້ໄດ້ຜ່ານການຍົກລະດັບທິດສະດີການເມືອງຂັ້ນສູງໃຫ້ໄດ້ຢ່າງໜ້ອຍ 15 ສະຫາຍ, ຂັ້ນພະແນກໃຫ້ໄດ້ຜ່ານການບຳລຸງທິດສະດີ ແລະ ຍົກລະດັບທິດສະດີການເມືອງຂັ້ນກາງຢ່າງໜ້ອຍ 10 ສະຫາຍ. ກໍ່ສ້າງ ແລະ ຮັບເອົາມະຫາຊົນຜູ້ກ້າວໜ້າເຂົ້າເປັນສະມາຊິກພັກໃຫ້ມີຈຳນວນເພີ່ມຂຶ້ນໃຫ້ໄດ້ຢ່າງໜ້ອຍ 50% ຂອງສະໄໝຜ່ານມາ ໂດຍຖືເອົາຄຸນນະ ພາບເປັນກົກ.

**ຫ້າ** ສຸມໃສ່ຈັດຕັ້ງປະຕິບັດ ບັນດາແຜນວຽກຈຸດສຸມ, ທີ່ໄດ້ກຳນົດໄວ້ໃນແຜນພັດທະນາ 5 ປີ ຄັ້ງທີ IV (2026-2030) ຢ່າງຕັ້ງໜ້າ ໃຫ້ບັນລຸຄາດໝາຍສູ້ຊົນໃນ 10 ເປົ້າໝາຍ, 49 ຄາດໝາຍ ແລະ ໂຕຊີ້ບອກ, ສຸມໃສ່ 5 ວຽກບູລິມະສິດສຳຄັນ ເພື່ອຫັນເປັນທັນສະໄໝດ້ວຍເຕັກໂນໂລຊີດີຈິຕອນ, 10 ແຜນວຽກຈຸດສຸມ, 124 ແຜນງານ ແລະ 283 ໂຄງການ ໂດຍໄດ້ກຳນົດນະໂຍບາຍ, ມາດຕະການ, ກົນໄກການຈັດຕັ້ງປະຕິບັດ ແລະ ການຕິດຕາມປະເມີນຜົນເປັນແຕ່ລະໄລຍະ ຮັບປະກັນໃຫ້ບັນລຸຜົນສຳເລັດຢ່າງມີປະສິດທິຜົນສູງ.

**ຫົກ** ສ້າງ ແລະ ປັບປຸງນະໂຍບາຍ-ນິຕິກຳ ທາງດ້ານເຕັກໂນໂລຊີ ດີຈິຕອນ ແລະ ການສື່ສານໃຫ້ເປັນລະບົບ ແລະ ພຽງພໍ, ທັງຮັບປະກັນການຈັດຕັ້ງປະຕິບັດ ບັນດານິຕິກຳທີ່ປະກາດໃຊ້ ໃຫ້ມີຜົນສັກສິດ ເພື່ອສົ່ງເສີມ ແລະ ຄຸ້ມຄອງດ້ານການບໍລິຫານລັດດີຈິຕອນ, ໄປສະນີ, ໂທລະຄົມມະນາຄົມ, ເຕັກໂນໂລຊີດີຈິຕອນ, ປັນຍາປະດິດ, ຂໍ້ມູນຂ່າວສານ ແລະ ການສື່ສານຜ່ານດາວທຽມ. ພັດທະນາໂຄງລ່າງພື້ນຖານໂທລະຄົມມະນາຄົມ/ໄອຊີທີ (ICT) ຄວາມໄວສູງ ສູ່ເຂດຈຸດສຸມເສດຖະກິດ, ເຂດຊົນນະບົດ ຫຼື ເຂດສະເພາະຂອງລັດຖະບານ, ສ້າງລະບົບຄວາມປອດໄພໄຊເບີ ໃຫ້ມີມາດຕະຖານສູງ ເພື່ອສະກັດກັ້ນການທຳລາຍເຄືອຂ່າຍເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ, ປົກປ້ອງຂໍ້ມູນ, ສະກັດກັ້ນການໂຈລະກຳຂໍ້ມູນຂ່າວສານທຸກຮູບແບບ ແລະ ສະກັດກັ້ນຂໍ້ມູນທີ່ເປັນໄພຄຸກຄາມຄວາມໝັ້ນຄົງຂອງຊາດ; ຍົກລະດັບສະຖາບັນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໃຫ້ກາຍເປັນມະຫາວິທະຍາໄລດ້ານ ICT ແຫ່ງຊາດ ເພື່ອສ້າງບຸກຄະລາກອນດ້ານດີຈິຕອນ ຕອບສະໜອງໃຫ້ແກ່ແຜນພັດທະນາເສດຖະກິດດີຈິຕອນຂອງລັດຖະບານ. ຄົ້ນຄ້ວາສ້າງ ສູນນຳໃຊ້ດາວທຽມ ແຫ່ງຊາດ (Lao National Satellite Application Center) ໂດຍຕິດພັນກັບການຄົ້ນຄວ້າສ້າງ ນິຕິກຳຄຸ້ມຄອງ ລວມທັງສ້າງເງື່ອນໄຂເພື່ອເຊື່ອມໂຍງກັບສາກົນ, ສົ່ງເສີມການພັດທະນາ ແລະ ການນຳໃຊ້ເຕັກໂນໂລຊີດີຈິຕອນ ໃຫ້ກາຍເປັນເຄື່ອງມືທີ່ທັນສະໄໝ, ປະກອບສ່ວນໃນການຄຸ້ມຄອງບໍລິຫານ ແລະ ການບໍລິການຂອງລັດຖະບານໃຫ້ເປັນດີຈິຕອນ, ໃຫ້ວຽກງານບໍລິຫານ ແລະ ບໍລິການຂອງພາກລັດສູ່ປະຊາຊົນ ມີຄວາມສະດວກ, ເຊື່ອຖືໄດ້, ໂປ່ງໃສ, ມີສະຖຽນລະພາບ, ຄວາມສະຫງົບປອດໄພ ແລະ ເຮັດໃຫ້ການເກັບລາຍຮັບຂອງລັດເພີ່ມຂຶ້ນ, ສົ່ງເສີມ, ພັດທະນາ ແລະ ນຳໃຊ້ເຕັກໂນໂລຊີ ແລະນະວັດຕະກຳໃໝ່ ໃຫ້ ເປັນຮູບປະທຳ, ປະກອບສ່ວນຢ່າງໜັກແໜ້ນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ເຕີບໂຕຕາມທິດສີຂຽວ ແລະ ຍືນຍົງ.

ກອງປະຊຸມໃຫຍ່ ໄດ້ຮັບກຽດຢ່າງສູງທີ່ໄດ້ຮັບຟັງຄຳໂອ້ລົມອັນມີຄວາມໝາຍໜັກແໜ້ນ ແລະ ເລິກເຊິ່ງ ຈາກ **ສະຫາຍ ພົນເອກ ວິໄລ ຫຼ້າຄຳຟອງ**, ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ, ປະທານຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ, ຜູ້ຊີ້ນຳການກະກຽມ ແລະ ດຳເນີນກອງປະຊຸມຜູ້ແທນສະມາຊິກພັກຂອງອົງຄະນະພັກກະຊວງ ຕສ ທີ່ໄດ້ນຳເອົາຄວາມຮັກແພງອັນອົບອຸ່ນ ມາສູ່ກອງປະຊຸມໃຫຍ່ຂອງພວກເຮົາໃນຄັ້ງນີ້, ສະຫາຍ ໄດ້ສະແດງຄວາມຍ້ອງຍໍຊົມເຊີຍ ຕໍ່ຜົນງານໃນການ ນຳພາ-ຊີ້ນຳ ຂອງຄະນະບໍລິຫານງານພັກກະຊວງໃນໄລຍະຜ່ານມາ ທີ່ໄດ້ປະກອບສ່ວນຢ່າງໃຫຍ່ຫຼວງຕໍ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ພ້ອມກັນນັ້ນ, ສະຫາຍຍັງໄດ້ສະແດງຄວາມເປັນຫ່ວງເປັນໄຍຕໍ່ດ້ານອ່ອນ ແລະ ບາງຂໍ້ຄົງຄ້າງ ທີ່ອົງຄະນະພັກກະຊວງຈະຕ້ອງສູ້ຊົນປັບປຸງແກ້ໄຂ. ສະຫາຍໄດ້ຮຽກຮ້ອງໃຫ້ບັນດາສະຫາຍຄະນະບໍລິຫານງານພັກຊຸດໃໝ່ ເອົາໃຈໃສ່ດັ່ງນີ້:

**ໜຶ່ງ**: ໃຫ້ຕັ້ງໜ້າຊີ້ນຳ-ນຳພາ ການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນສະມາຊິກພັກ ຄັ້ງທີ III ໃຫ້ເປັນແຜນງານ, ໂຄງການ ແລະ ສ້າງເປັນນິຕິກຳລະອຽດ ເລີ່ມຕັ້ງແຕ່ການຈັດຕັ້ງເຜີຍແຜ່, ເຊື່ອມຊຶມໃນຄະນະບໍລິຫານງານພັກ ລົງໄປເຖິງຄະນະພັກແຕ່ລະຂັ້ນ, ສະມາຊິກພັກ, ພະນັກງານ-ລັດຖະກອນ ທີ່ນອນໃນການຄຸ້ມຄອງໃຫ້ເລິກເຊິ່ງ ແລະ ທົ່ວເຖິງ ເພື່ອສ້າງຄວາມຮັບຮູ້ເຂົ້າໃຈ ແລະ ເປັນເອກະພາບກັນທາງດ້ານທັດສະນະ, ການກະທຳ, ສາມາດຍູ້ຂະບວນຢ່າງແຂງແຮງ, ຕໍ່ເນື່ອງ ແລະ ມີປະສິດທິຜົນ.

**ສອງ**: ໃຫ້ແບ່ງວຽກ, ແບ່ງຄວາມຮັບຜິດຊອບ ພາຍໃນຄະນະບໍລິຫານງານພັກ, ຄະນະປະຈຳພັກໃຫ້ລະອຽດ, ຈະແຈ້ງ; ຕ້ອງເຊີດຊູຄວາມເປັນເຈົ້າການຕໍ່ໜ້າທີ່ການເມືອງ, ທຸ້ມເທເຫື່ອແຮງ, ສະຕິປັນຍາ, ຄວາມຮູ້, ຄວາມສາມາດ, ມີຄວາມເສຍສະຫຼະ ເພື່ອເຮັດສຳເລັດໜ້າທີ່ ທີ່ຖືກມອບໝາຍໃຫ້.

**ສາມ**: ຕ້ອງຍຶດໝັ້ນ ແລະ ປະຕິບັດຢ່າງເຂັ້ມງວດບັນດາຫຼັກການ, ລະບອບແບບແຜນວິທີນຳພາຂອງພັກ ແລະ ມີຄວາມຮັບຜິດຊອບໂດຍກົງ ຕໍ່ຜົນໄດ້ຜົນເສຍຂອງວຽກງານທີ່ຖືກມອບໝາຍ, ເດັດຂາດແກ້ໄຂ ຕໍ່ການປະພຶດແບບອາດຍາສິດ, ສໍ້ລາດບັງຫຼວງ, ເສື່ອມທາດຂາດຄຸນ ແລະ ອື່ນໆ ທີ່ຈະນຳຜົນເສຍຫາຍມາສູ່ຕົນເອງ ແລະ ກົມກອງ.

**ສີ່**: ຕ້ອງສືບຕໍ່ຕັ້ງໜ້າຝຶກຝົນຫຼໍ່ຫຼອມຕົນເອງ ທາງດ້ານຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ຄວາມເປັນແບບຢ່າງນຳໜ້າ, ຄວາມຈົງຮັກພັກດີ ແລະ ຄວາມສັດຊື່ບໍລິສຸດຕໍ່ອຸດົມການຂອງພັກ ແລະ ຜົນປະໂຫຍດຂອງປະເທດຊາດ; ມີຄວາມສາມັກຄີຮັກແພງ ແລະ ມີຄວາມຈິງໃຈ ຕໍ່ໝູ່ຄະນະ ແລະ ຊ່ວຍເຫຼືອ ກໍ່ສ້າງໝູ່ຄະນະໃຫ້ມີຄວາມເຂັ້ມແຂງ; ດຳລົງຊີວິດແບບປອດໃສຂາວສະອາດ, ດຸໝັ່ນສັດຊື່, ຕັ້ງໜ້າຄົ້ນຄວ້າຮໍ່າຮຽນ ເພື່ອຍົກລະດັບວິຊາສະເພາະດ້ານຕ່າງໆຂອງຕົນ ໃຫ້ສູງຂຶ້ນ ຢ່າງບໍ່ຢຸດຢັ້ງ.

**ຫ້າ**: ສືບຕໍ່ເສີມຂະຫຍາຍມູນເຊື້ອແຫ່ງຄວາມສາມັກຄີ, ຄວາມເປັນເອກະພາບພາຍໃນພັກ ແລະ ຄວາມສາມັກຄີກັບທຸກພາກສ່ວນໃຫ້ແໜ້ນແຟ້ນ, ເຊີດຊູຊ່ວຍເຫຼືອ, ເຄົາລົບເຊິ່ງກັນ ແລະ ກັນ ບົນພື້ນຖານແນວທາງຂອງພັກ.

**ຫົກ**: ຕ້ອງສູ້ຊົນນຳພາທຸກການຈັດຕັ້ງ ທັງພາກລັດ ແລະ ພາກເອກະຊົນ ໃຫ້ຫັນເປັນທັນສະໄໝໄດ້ໄວ.

**ເຈັດ**: ຕ້ອງເອົາໃຈໃສ່ຄຸ້ມຄອງສື່ສັງຄົມອອນລາຍ, ຄວາມປອດໄພໄຊເບີ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ ເພື່ອຕອບຕ້ານ ແລະ ສະກັດກັ້ນກົນອຸບາຍມ້າງເພ ທຳລາຍຂອງອິດທິກຳລັງປໍລະປັກ.

ກອງປະຊຸມໃຫຍ່ຮຽກຮ້ອງມາຍັງບັນດາສະຫາຍສະມາຊິກພັກ, ພະນັກງານ ໃນທົ່ວຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຈົ່ງເຊີດຊູສະຕິ ແລະ ຍົກສູງຄວາມຮັບຜິດຊອບໜ້າທີ່ການເມືອງຂອງຕົນ ເຮັດວຽກງານໃຫ້ມີການຫັນປ່ຽນໃໝ່ທີ່ຕັ້ງໜ້າ, ເຮັດໃຫ້ພັກມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ, ເດັດດ່ຽວຍົກສູງຄວາມຮັບຜິດຊອບ ຕໍ່ວຽກງານ ເຕັກໂນໂລຊີ ແລະ ການສື່ສານ ໃຫ້ກາຍເປັນກຳລັງແຮງຂັບເຄື່ອນ ໃນການຫັນເປັນດີຈິຕອນ ຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ, ປະກອບສ່ວນເຂົ້າໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກ ໃຫ້ປະກົດຜົນເປັນຈິງຢ່າງສະຫງ່າງາມ.

# ຄະນະບໍລິຫານງານພັກ ກະຊວງເຕັກໂນໂລຊີ ແລະ ການສື່ສານ ສະໄໝທີ III

## ຄະນະປະຈຳພັກ



ສະຫາຍ ສັນຕິສຸກ ສິມມາລາວົງ
ເລຂາຄະນະບໍລິຫານງານພັກ



ສະຫາຍ ແກ້ວວິສຸກ ໂສລະພົມ
ຮອງເລຂາຄະນະບໍລິຫານງານພັກ



ສະຫາຍ ໄຊລືຊາ ອິນສີຊຽງໃໝ່
ປະທານ ຄະນະກວດກາພັກ



ສະຫາຍ ໄຊຊະນະ ສິດທິພອນ



ສະຫາຍ ທະວີສັກ ມະໂນທັມ



ສະຫາຍ ພວງປະເສີດ ແກ້ວສຸວັນ



ສະຫາຍ ມະໂນທອງ ວົງລໍຄຳ

## ກຳມະການຄະນະພັກ



ສະຫາຍ ສຸພົນ ຈັນທະວີໄຊ



ສະຫາຍ ສະຫວັນ ລາດສະດີ



ສະຫາຍ ສຸດໃຈ ລໍລອນສີ



ສະຫາຍ ຄຳຫຼ້າ ສູນນະລັດ



ສະຫາຍ ພົນປະສິດ ພິດສະໄໝ



ສະຫາຍ ມິນາໄຊ ພິລາວົງ



ສະຫາຍ ນາງ ເກສອນ ສຸລິວົງ



ສະຫາຍ ປະດັບໄຊ ໄຊຍະໂຄດ



ສະຫາຍ ພູທອງ ສີສະຫວັດ



ສະຫາຍ ນາງ ສຸພາລັກ ສີລາເພັດ



ສະຫາຍ ຈັນທະວີພອນ ເຄືອບຄຳວອນ



ສະຫາຍ ສົມພອນ ສີຫາລາດ



ສະຫາຍ ສຸດໃຈ ພົມມະສີ



ສະຫາຍ ປະລິນຍາ ພົມມາວິເສດ



ສະຫາຍ ຄຳຜາ ທອງວັນນາ



ສະຫາຍ ສີສົມ ປອງນະທີ

## ຮອງປະທານຄະນະກວດກາພັກ



ສະຫາຍ ນາງ ສຸພາລັກ ສີລາເພັດ



ສະຫາຍ ມັງກອນ ແກ້ວຄຳດີ